# ການກະກຽມສ້າງແຜນພັດທະນາຂະແໜງການ ສຶກສາ, ວິທະຍາສາດ ແລະ ກິລາ 5 ປີ ຄັ້ງທີ X (2026-2030)

**24 ກັນຍາ 2024**

# ແຜນພັດທະນາຂະແໜງການສຶກສາ ແລະ ກິລາ 2021-2025 ບົດຮຽນທີ່ຖອດຖອນໄດ້

ໂຄງສ້າງ ມີຄວາມເກາະກ່າຍກັນດີ ແຕ່ມີຄວາມສັບສົນ ແລະ ເນື້ອຫາຂ້ອນຂ້າງຫຼາຍເກີນໄປ

- ພາກທີ 1: 8 ຜົນໄດ້ຮັບລະດັບສູງ, 45 ຜົນໄດ້ຮັບລະດັບກາງ, 59 ຕົວຊີ້ບອກຜົນໄດ້ຮັບ (ແລະ ມີເພີ່ມຢູ່ໃນແຜນຂອງຂະແໜງການຍ່ອຍ), 187 ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ
- ຄວາມເຊື່ອມໂຍງກັນລະຫວ່າງ ພາກທີ 1 ແລະ ພາກທີ 2 (ແຜນຂະແໜງການຍ່ອຍ) ບໍ່ຈະແຈ້ງ; ຄວາມຮັບຮູ້, ການຈັດຕັ້ງປະຕິບັດ ແລະ ການຕິດຕາມ ບັນດານະໂຍບາຍ ໃນພາກທີ 1 ແມ່ນ ຈຳກັດ
- ບາງຕົວຊີ້ບອກບໍ່ຈະແຈ້ງ ແລະ ບໍ່ສາມາດວັດແທກໄດ້
- ມີຫຼາຍຜົນໄດ້ຮັບ ແລະ ຄາດໝາຍ ທີ່ບໍ່ສາມາດບັນລຸໄດ້, ມີຫຼາຍນະໂຍບາຍ ແລະ ແຜນງານ ທີ່ບໍ່ໄດ້ຮັບການຈັດຕັ້ງປະຕິບັດ
- ຍ້ອນຫຍັງ? ງົບປະມານ ແລະ ຂີດຄວາມສາມາດມີຈຳກັດ ແຕ່ຊ້ຳພັດມີການວາງແຜນຫຼາຍ ທັງບໍ່ມີຄວາມຈະແຈ້ງ (ໂດຍສະເພາະ ຫຼາຍໆນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ)

## ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ 2026-30 ປັບປຸງຈາກບົດຮຽນທີ່ຖອດຖອນໄດ້

- ຕ້ອງວາງແຜນບົນພື້ນຖານຄວາມເປັນຈິງ ແລະ ສິ່ງທີ່ເປັນໄປໄດ້, ພ້ອມທັງ ເພີ່ມທະວີຄວາມສາມາດໃນການກໍານົດບູລິມະສິດ
- ໃຫ້ມີຄວາມງ່າຍດາຍຂຶ້ນ (ໂດຍທີ່ຍັງສຸມໃສ່ບຸລິມະສິດຕົ້ນຕໍ)
- ຮັບປະກັນຄວາມສອດຄ່ອງກັນຢ່າງຈະແຈ້ງ ລະຫວ່າງພາກທີ 1 ແລະ ພາກທີ 2, ແລະ ລະຫວ່າງ ບັນດາຂະແໜງການຍ່ອຍ
- ຮັບປະກັນວ່າ ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ ມີຄວາມຈະແຈ້ງ, ສາມາດປະຕິບັດໄດ້ ແລະ ມີໂອກາດທີ່ຈະມີງົບປະມານຮອງຮັບ
- ຮັບປະກັນວ່າ ບັນດາຕົວຊີ້ບອກຕ່າງໆ ສາມາດວັດແທກໄດ້

# ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ 2026-30: (ຮ່າງ) ໂຄງສ້າງ

ຄ້າຍຄືກັບ ແຜນພັດທະນາ 2021-25 ແຕ່ງ່າຍດາຍຂຶ້ນ ແລະ ສຸມໃສ່ໃນວຽກງານທີ່ຄາດວ່າ ຈະສາມາດຈັດຕັ້ງປະຕິບັດໄດ້

- ພາກທີ 1: ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ 2026-2030
  - ຜົນສຳເລັດຕົ້ນຕໍ ແລະ ບົດຮຽນທີ່ຖອດຖອນໄດ້ ຈາກ ແຜນ 2021-2025
  - ສະພາບລວມດ້ານຍຸດທະສາດ ລວມທັງ ສິ່ງທ້າທາຍ ແລະ ຄວາມສ່ຽງ
  - ເປົ້າໝາຍລວມ
  - ຜົນໄດ້ຮັບລະດັບສູງ
  - ຜົນໄດ້ຮັບລະດັບກາງ
  - ຂອບຕິດຕາມ ແລະ ປະເມີນຜົນ ລວມທັງ ຕົວຊີ້ບອກຜົນໄດ້ຮັບຂອງແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ
  - ຍຸດທະສາດດ້ານການເງິນ
- ພາກທີ 2: ແຜນພັດທະນາຂອງຂະແໜງການຍ່ອຍ 2026-2030
  - ສະພາບລວມ, ຍຸດທະສາດສະເພາະ, ແຜນງານ, ຕົວຊີ້ບອກ ແລະ ຄາດໝາຍ
  - ໂດຍໃຫ້ຄວາມສອດຄ່ອງກັບພາກທີ 1 (ຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ)
- ແຜນງານຂອງວຽກສຶກສາ, ວິທະຍາສາດ ແລະ ກິລາ ຈະແຍກກັນ ເຖິງວ່າຈະສາມາດລວມເຂົ້າກັນເປັນພາກຕ່າງໆໃນເອກະສານແຜນດຽວກັນກໍ່ຕາມ

# ESSSDP 2026-30: ຮ່າງເປົ້າໝາຍລວມ, ຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ ສໍາລັບ ວຽກງານສຶກສາ

## ເປົ້າໝາຍລວມ

ການສະໜອງການສຶກສາຂັ້ນພື້ນຖານຢ່າງທົ່ວເຖິງ ແລະ ການຂະຫຍາຍໂອກາດໃນການສຶກສາຢ່າງຕໍ່ເນື່ອງ ແລະ ເທົ່າທຽມ ເພື່ອສະໜັບສະໜູນການປັບປຸງການຮຽນຮູ້ ແລະ ທັກສະທີ່ດີຂຶ້ນເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ 4 (SDG-4).

### ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 1

ການເຂົ້າເຖິງການສຶກສາ 1 ປີ ໃນຊັ້ນການສຶກສາກ່ອນໄວຮຽນ ແລະ ການເຂົ້າເຖິງການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ ແລະ ເທົ່າທຽມ, ພ້ອມທັງ ຜົນການຮຽນຂອງນັກຮຽນໄດ້ຮັບການປັບປຸງໃຫ້ດີຂຶ້ນ ໂດຍສຸມໃສ່ຫຼຸດຜ່ອນຄວາມແຕກໂຕນ.

#### ຜົນໄດ້ຮັບລະດັບກາງ

1. ການຈັດຕັ້ງປະຕິບັດຫຼັກສູດ ໂດຍສຸມໃສ່ການຮູ້ໜັງສື (ອ່ານອອກ ຂຽນໄດ້) ແລະ ການຄິດໄລ່ເລກ ໄດ້ຮັບການປັບປຸງໃຫ້ດີຂຶ້ນ
2. ຈໍານວນຄູສອນ ແລະ ຜູ້ອໍານວຍການທີ່ມີຄວາມຮູ້ ຄວາມສາມາດ,ສອດຄ່ອງຕາມມາດຕະຖານວິຊາຊີບ ເພີ່ມຂຶ້ນ
3. ການສະໜອງການສຶກສາ ສໍາລັບການກຽມຄວາມພ້ອມ,1 ປີ ໃນຊັ້ນການສຶກສາກ່ອນໄວຮຽນເພີ່ມຂຶ້ນ
4. ການສຶກສາຊັ້ນມັດທະຍົມຕອນຕົ້ນໃນເຂດຊົນນະບົດໄດ້ຮັບການຂະຫຍາຍເພີ່ມຂຶ້ນ
5. ຄ່າໃຊ້ຈ່າຍຂອງຄອບຄົວກ່ຽວກັບການເຂົ້າຮຽນຫຼຸດລົງ
6. ຄວາມຮັບຮູ້ຂອງຊຸມຊົນ ຕໍ່ກັບ ຄວາມສໍາຄັນຂອງການສຶກສາເພີ່ມຂຶ້ນ
7. ສິ່ງອໍານວຍຄວາມສະດວກຕ່າງໆໃນໂຮງຮຽນ ໄດ້ຮັບການປັບປຸງໃຫ້ດີຂຶ້ນ

### ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 2

ອັດຕາການຮູ້ໜັງສື ແລະ ຜົນໄດ້ຮັບຈາກວິຊາຊີບຂັ້ນພື້ນຖານ ແລະ ທັກສະຊີວິດ ໃນໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ ໂດຍສຸມໃສ່ການຫຼຸດຜ່ອນຄວາມແຕກໂຕນ.

.

#### ຜົນໄດ້ຮັບລະດັບກາງ

2.1 ການເຂົ້າເຖິງການສຶກສານອກໂຮງຮຽນ ໂດຍເນັ້ນໃສ່ກຸ່ມເປົ້າໝາຍຜູ້ທີ່ດ້ອຍໂອກາດ ແລະ ເຂດຫ່າງໄກສອກຫຼີກ ໄດ້ຮັບການຂະຫຍາຍເພີ່ມຂຶ້ນ

2.2 ຄວາມຮັບຮູ້ຂອງຊຸມຊົນ ຕໍ່ກັບ ຄວາມສໍາຄັນຂອງການສຶກສາ ສໍາລັບໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ

2.3 ການສະໜອງຄູສອນທີ່ມີທັກສະກ່ຽວກັບການຮຽນຮູ້ຜູ້ໃຫຍ່ ໃນການສຶກສານອກໂຮງຮຽນ ເພີ່ມຂຶ້ນ

2.4 ຄຸນນະພາບຂອງການສຶກສານອກໂຮງຮຽນ ລວມໄປເຖິງ ສິ່ງອໍານວຍຄວາມສະດວກ, ມາດຕະຖານ, ການປະເມີນ, ຊັບພະຍາກອນໃນການຮຽນ-ການສອນ ໄດ້ຮັບການປັບປຸງໃຫ້ດີຂຶ້ນ

### ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 3

ຄຸນນະພາບ ແລະ ຄວາມສອດຄ່ອງ ຂອງການສຶກສາຫຼັງຂັ້ນພື້ນຖານ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພື່ອເພີ່ມໂອກາດໃນການຈ້າງງານຂອງຜູ້ທີ່ຮຽນຈົບ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ສີຂຽວ ແລະ ຍືນຍົງ.

#### ຜົນໄດ້ຮັບລະດັບກາງ

3.1 ຄ່າໃຊ້ຈ່າຍສໍາລັບນັກຮຽນທີ່ດ້ອຍໂອກາດ ຫຼຸດລົງ

3.2 ຄຸນະພາບ ແລະ ຄວາມສອດຄ່ອງ ໃນການຮຽນ-ການສອນ ສໍາລັບ ຊັ້ນມັດທະຍົມຕອນປາຍ ໄດ້ຮັບການປັບປຸງໃຫ້ດີຂຶ້ນ

3.3 ມາດຕະຖານ, ຫຼັກສູດ ແລະ ລະບົບການປະກັນຄຸນນະພາບ ໃນອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ມີຄວາມເຂັ້ມແຂງຂຶ້ນ

3.4 ການຮ່ວມມືລະຫວ່າງ ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ພາກທຸລະກິດ ມີຄວາມເຂັ້ມແຂງຂຶ້ນ

### ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 4

ຂະແໜງການສຶກສາ ມີງົບປະມານ ແລະ ຊັບພະຍາກອນມະນຸດຢ່າງພຽງພໍ, ແລະ ມີການຄຸ້ມຄອງຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ເພື່ອສະໜັບສະໜູນການສະໜອງການສຶກສາໃຫ້ມີຄວາມເທົ່າທຽມ ແລະ ເພື່ອປັບປຸງການປະຕິບັດໜ້າທີ່ຂອງຂະແໜງການ.

#### ຜົນໄດ້ຮັບລະດັບກາງ

4.1 ການຈັດສັນງົບປະມານໃຫ້ແກ່ຂະແໜງການສຶກສາ ເພີ່ມຂຶ້ນ

4.2 ຄວາມແຕກໂຕນໃນການສະໜອງການສຶກສາ ຫຼຸດລົງ

4.3 ປະສິດທິພາບໃນການສະໜອງຊັບພະຍາກອນ ແລະ ການສະໜອງການສຶກສາ ໄດ້ຮັບການປັບປຸງໃຫ້ດີຂຶ້ນ

4.4 ລະບົບການຄຸ້ມຄອງການສຶກສາ ມີຄວາມເຂັ້ມແຂງຂຶ້ນ

4.5 ການຕິດຕາມ, ປະເມີນຜົນ ແລະ ການຄົ້ນຄວ້າ ມີຄວາມເຂັ້ມແຂງຂຶ້ນ

4.6 ມີການຮ່ວມມື ກັບ ພາກເອກະຊົນ ເພີ່ມຂຶ້ນ

| (ຮ່າງ) ຜົນໄດ້ຮັບລະດັບສູງ ແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ແລະ ເປົ້າໝາຍການພັດທະນາແບບຍືນຍົງ | SDG |
|---|---|
| **ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 1**: ການເຂົ້າເຖິງການສຶກສາ 1 ປີ ໃນຊັ້ນການສຶກສາກ່ອນໄວຮຽນ ແລະ ການເຂົ້າເຖິງການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ ແລະ ເທົ່າທຽມ, ພ້ອມທັງ ຜົນການຮຽນຂອງນັກຮຽນໄດ້ຮັບການປັບປຸງໃຫ້ດີຂຶ້ນ ໂດຍສຸມໃສ່ຫຼຸດຜ່ອນຄວາມແຕກໂຕນ. | 4.1, 4.2. 4c. |
| **ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 2**: ອັດຕາການຮູ້ໜັງສື ແລະ ຜົນໄດ້ຮັບຈາກວິຊາຊີບຂັ້ນພື້ນຖານ ແລະ ທັກສະຊີວິດ ໃນໄວໜຸ່ມ ແລະ ຜູ້ໃຫຍ່ ເພີ່ມຂຶ້ນ ໂດຍສຸມໃສ່ການຫຼຸດຜ່ອນຄວາມແຕກໂຕນ. | 4.6. 4c. |
| **ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 3**: ຄຸນນະພາບ ແລະ ຄວາມສອດຄ່ອງ ຂອງການສຶກສາຫຼັງຂັ້ນພື້ນຖານ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພື່ອເພີ່ມໂອກາດໃນການຈ້າງງານຂອງຜູ້ທີ່ຮຽນຈົບ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ສົ່ງເສີມການພັດທະນາເສດຖະກິດ-ສັງຄົມ ສີຂຽວ ແລະ ຍືນຍົງ. | 4.3. 4.4. |
| **ເປົ້າໝາຍ / ຜົນໄດ້ຮັບລະດັບສູງ ທີ 4**: ຂະແໜງການສຶກສາ ມີງົບປະມານ ແລະ ຊັບພະຍາກອນມະນຸດຢ່າງພຽງພໍ, ແລະ ມີການຄຸ້ມຄອງຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ເພື່ອສະໜັບສະໜູນ ການສະໜອງການສຶກສາໃຫ້ມີຄວາມເທົ່າທຽມ ແລະ ເພື່ອປັບປຸງການປະຕິບັດໜ້າທີ່ຂອງຂະແໜງການ. | 4.5. 4a. |

# ຂະບວນການສ້າງແຜນພັດທະນາຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ 5 ປີ ຄັ້ງທີ X (2026-2030)

- ສ້າງຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບ ກະກຽມການສ້າງແຜນພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ 5 ປີ ຄັ້ງທີ X
- ຈັດກອງປະຊຸມວິຊາການ ແລະ ກອງປະຊຸມປຶກສາຫາລື ທັງໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ
  - ວັນທີ 30 ສິງຫາ 2024 ໄດ້ນຳສະເໜີທີ່ກອງປະຊຸມໜ່ວຍງານວິຊາການຂະແໜງການຍ່ອຍບໍລິຫານ-ຄຸ້ມຄອງການສຶກສາ (FG5)
- ທົບທວນ ແລະ ຮັບຮອງ ຮ່າງເບື້ອງຕົ້ນ ແລະ ຮ່າງສຸດທ້າຍ ໂດຍ ໜ່ວຍງານວິຊາການຂະແໜງການສຶກສາ ແລະ ກິລາ

# ຂອບເວລາໃນການຈັດຕັ້ງປະຕິບັດ ESSSDP 2026-30

| | ຂອບເວລາໃນການສ້າງແຜນ ESSSDP 2026-30 | 2024 | | | | | 2025 | | | | | |
|---|---|---|---|---|---|---|---|---|---|---|---|---|
| | | ໄຕມາດ 3 | | ໄຕມາດ 4 | | | ໄຕມາດ 1 | | | ໄຕມາດ 2 | | |
| ລດ. | ຂັ້ນຕອນ / ໜ້າວຽກສຳຄັນ | 8 | 9 | 10 | 11 | 12 | 1 | 2 | 3 | 4 | 5 | 6 |
| 1 | ສ້າງໂຄງຮ່າງ ລວມທັງ ຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ | | | | | | | | | | | |
| 2 | ຮັບຮອງໂຄງຮ່າງ, ຜົນໄດ້ຮັບລະດັບສູງ ແລະ ຜົນໄດ້ຮັບລະດັບກາງ | | | | | | | | | | | |
| 3 | ຮ່າງແຜນ ພາກທີ 1 ແລະ ພາກທີ 2 | | | | | | | | | | | |
| 4 | ສະພາບລວມ, ຈຸດປະສົງ, ນະໂຍບາຍທີ່ເປັນບູລິມະສິດ, ນະໂຍບາຍທີ່ຕ້ອງຈັດຕັ້ງປະຕິບັດ, ຍຸດທະສາດ ແລະ ແຜນງານ | | | | | | | | | | | |
| 5 | ພັດທະນາ ຕົວຊີ້ບອກຕົ້ນຕໍ, ຄາດໝາຍ ແລະ ຂອບຕິດຕາມ ແລະ ປະເມີນຜົນ | | | | | | | | | | | |
| 6 | ພັດທະນາ ແຜນງົບປະມານຂອງ ແຜນ ESSSDP 2026-2030 | | | | | | | | | | | |
| 7 | ຮ່າງແຜນ ພາກທີ 2 | | | | | | | | | | | |
| 8 | ພັດທະນາແຜນຂອງຂະແໜງການຍ່ອຍ (ຍຸດທະສາດ, ແຜນງານ, ຕົວຊີ້ບອກ) | | | | | | | | | | | |
| 9 | ຈັດກອງປະຊຸມປຶກສາຫາລື ໃນແຕ່ລະຂັ້ນ ແລະ ສັງລວມຜົນຂອງການປຶກສາຫາລື | | | | | | | | | | | |
| 10 | ສັງລວມແຜນ ຮ່າງທີ 1 | | | | | | | | | | | |
| 11 | ຮ່າງແຜນສະບັບທີ 1 ສຳເລັດ ແລະ ຮັບຮອງ ໂດຍ ຄະນະຊີ້ນຳລວມ ໜ່ວຍງານວິຊາການຂະແໜງການສຶກສາ | | | | | | | | | | | |
| 12 | ປັບປຸງຂໍ້ມູນປີຖານ ໂດຍນຳໃຊ້ຂໍ້ມູນສົກຮຽນ 2024/25, ປັບປຸງຄາດໝາຍ, ຍຸດທະສາດ ແລະ ແຜນງານ | | | | | | | | | | | |
| 13 | ທົບທວນຄືນ ແລະ ປັບປຸງ ແຜນ ໃຫ້ເໝາະສົມ | | | | | | | | | | | |
| 14 | ຮ່າງແຜນສະບັບສຸດທ້າຍ ສຳເລັດ ແລະ ຮັບຮອງ ໂດຍ ຄະນະຊີ້ນຳລວມ ໜ່ວຍງານວິຊາການຂະແໜງການສຶກສາ | | | | | | | | | | | |

# ESSSDP 2026-30: ການສະໜັບສະໜູນຂອງຄູ່ຮ່ວມພັດທະນາ (ມາເຖິງປະຈຸບັນ)

| | |
|---|---|
| ການສະໜັບສະໜູນທາງດ້ານວິຊາການ | |
| ແຜນລວມ | Australia, EU |
| ຂອບຕິດຕາມ ແລະ ປະເມີນຜົນ | Australia, EU, UNICEF |
| ການເງິນ | EU |
| ການສຶກສາກ່ອນໄວຮຽນ | UNICEF |
| ປະຖົມສຶກສາ | Australia (BEQUAL), UNICEF |
| ມັດທະຍົມສຶກສາຕອນຕົ້ນ | |
| ມັດທະຍົມສຶກສາຕອນປາຍ | ADB? |
| ການສຶກສານອກໂຮງຮຽນ | DVV |
| ການສຶກສາຄູ | Australia (BEQUAL) |
| ອາຊີວະສຶກສາ | LuxDev |
| ການສຶກສາຊັ້ນສູງ | USAID |
| ການສະໜັບສະໜູນດ້ານການຈັດຕັ້ງປະຕິບັດກິດຈະກຳ (ການບໍລິຫານຕ່າງໆ) | |
| ການຈັດກອງປະຊຸມໃນຂັ້ນສູນກາງ | Australia, SCI |
| ການຈັດກອງປະຊຸມໃນຂັ້ນທ້ອງຖິ່ນ | Australia, JICA |

# ຂໍຂອບໃຈ